ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

===000===

ກະຊວງສາທາລະນະສຸກ

ເລກທີ 1146/ກຊສ

ນະຄອນຫຼວງວຽງຈັນ, ວັນທີ 04 OCT 2011

## ຄໍາສັ່ງແນະນໍາ

## ຂອງລັດຖະມົນຕີວ່າການກະຊວງສາທາລະນະສຸກ

ເຖິງ: ທ່ານຫົວໜ້າພະແນກສາທາລະນະສຸກ ແຂວງ ແລະ ນະຄອນຫຼວງ ໃນທົ່ວປະເທດ

ເລື່ອງ: ການຄຸ້ມຄອງຕິດຕາມ ກວດກາ ແລະ ວາງມາດຕະການຕໍ່ຢາທີ່ບໍ່ໄດ້ຂຶ້ນທະບຽນທີ່ຈໍລະຈອນຈໍາໜ່າຍຢູ່ ສປປ ລາວ

- ອີງຕາມກົດໝາຍວ່າດ້ວຍຢາ ແລະ ຜະລິດຕະພັນການແພດສະບັບເລກທີ 01/ສພຊ ລົງວັນທີ 8 ເມສາ 2000
- ອີງຕາມຂໍ້ກໍານົດຂອງກະຊວງສາທາລະນະສຸກວ່າດ້ວຍການຂຶ້ນທະບຽນຢາ ສະບັບເລກທີ 1441/ກຊສ. ລົງວັນທີ 13 ສິງຫາ 2003

ເພື່ອປົກປ້ອງຄຸ້ມຄອງຜູ້ບໍລິໂພກໃຫ້ໄດ້ຮັບແຕ່ຢາດີມີຄຸນນະພາບດີ, ມີຄວາມປອດໄພ ແລະ ຖືກນໍາໃຊ້ຢ່າງສົມເຫດສົມຜົນ, ປະກອບສ່ວນເຮັດໃຫ້ສຸຂະພາບຂອງປະຊາຊົນດີຂຶ້ນ. ກະຊວງສາທາລະນະສຸກໄດ້ປະເມີນຜົນຕີລາຄາສະພາບການວາງຈໍາໜ່າຍຢາຢູ່ຮ້ານຂາຍຍ່ອຍຢາໃນທົ່ວປະເທດ ແລະ ເຫັນໄດ້ບາງສະພາບການຫຍໍ້ທໍ້ທີ່ເກີດຂຶ້ນເຊັ່ນ:

- ມີຢາຈໍານວນຫລາຍທີ່ວາງຈໍາໜ່າຍຢູ່ສະຖານທີ່ບໍລິການສາທາລະນະສຸກຂັ້ນຕ່າງໆໂດຍບໍ່ໄດ້ຮັບການຂຶ້ນທະບຽນຢູ່ກົມອາຫານແລະຢາ ແລະ ບໍ່ໄດ້ຜ່ານການອະນຸຍາດຈາກທາງການ, ສ່ວນຫລາຍແມ່ນຢານໍາເຂົ້າ ແລະ ຈໍານວນນຶ່ງແມ່ນຢາຜະລິດຢູ່ພາຍໃນ. ສະພາບການດັ່ງກ່າວນີ້ເຮັດໃຫ້ມີຄວາມສ່ຽງສູງຕໍ່ສຸຂະພາບ ແລະ ຄວາມປອດໄພຂອງປະຊາຊົນຜູ້ບໍລິໂພກ, ບໍ່ສົ່ງເສີມໄດ້ຜູ້ເຮັດທຸລະກິດທີ່ຖືກຕ້ອງ ແລະ ເປັນການລະເມີດຕໍ່ຂໍ້ກໍານົດ ກົດໝາຍ ທີ່ໄດ້ວາງອອກ. ເພື່ອເປັນການປັບປຸງແລະແກ້ໄຂສະພາບການດັ່ງກ່າວຂ້າງເທິງນີ້

ລັດຖະມົນຕີວ່າການກະຊວງສາທາລະນະສຸກຈຶ່ງອອກຄຳສັ່ງແນະນຳຄືດັ່ງນີ້:

1. ນັບແຕ່ວັນທີ 1 ມັງກອນ 2012 ເປັນຕົ້ນໄປ ຈະບໍ່ອະນຸຍາດໃຫ້ຢາທີ່ບໍ່ຂຶ້ນທະບຽນນຳກົມອາຫານ ແລະ ຢາ ກະຊວງສາທາລະນະສຸກ ຈຳໜ່າຍຢູ່ໃນສະຖານທີ່ບໍລິການສາທາລະນະສຸກທຸກໆ ຂັ້ນ, ລວມທັງຢູ່ຮ້ານຂາຍຢາທຸກແຫ່ງ ຢູ່ ສປປ ລາວ
2. ຂະແໜງອາຫານ ແລະ ຢາແຂວງ ຕ້ອງກວດກາ ການຂໍອະນຸຍາດນຳຢາເຂົ້າມາຈຳໜ່າຍຂອງ ບໍລິສັດ ແລະ ສາຂາ ຢ່າງເຂັ້ມງວດ.
3. ໜ່ວຍງານກວດກາຂອງຂະແໜງອາຫານແລະຢາ ແຕ່ລະຂັ້ນ ນັບແຕ່ຂັ້ນສູນກາງ ຮອດທ້ອງຖິ່ນ ຕ້ອງ ເອົາໃຈໃສ່ລົງຕິດຕາມກວດກາການຈໍລະຈອນຈຳໜ່າຍຕົວຈິງ ຕາມເປົ້າໝາຍຕ່າງໆ ໃນທົ່ວປະເທດ
4. ໃນກໍລະນີ ກວດພົບເຫັນ ຢາບໍ່ໄດ້ຂຶ້ນທະບຽນ ວາງຈຳໜ່າຍໃນຮ້ານຂາຍຢາ ຫລື ສະຖານທີ່ບໍລິການ ສາທາລະນະສຸກ ໃຫ້ປະຕິບັດມາດຕະການ ຕໍ່ຜູ້ລະເມີດ ຕາມຂໍ້ກຳນົດ ເລກທີ 1441/ກຊສ, ລົງວັນທີ 13 ສິງຫາ 2003 ໄດ້ວາງອອກຕາມ ໝວດທີ 6 ຂໍ້ຫ້າມ ແລະ ມາດຕະການ ຕໍ່ຜູ້ລະເມີດ (ກ່າວເຕືອນ, ຍຶດຜະລິດຕະພັນ, ປັບໃໝ 100% ຂອງມູນຄ່າ ແລະ ປິດກິດຈະການ ຊົ່ວຄາວ ຫລື ຖາວອນ)
5. ມອບໃຫ້ພະແນກສາທາລະນະສຸກແຂວງຊຸກຍູ້, ຊີ້ນຳການຈັດຕັ້ງປະຕິບັດ ການຕິດຕາມກວດກາ ຢູ່ຂັ້ນ ແຂວງ ແລະ ເມືອງ ຢ່າງໃກ້ຊິດ ແລະ ແຈ້ງຕໍ່ໄປຍັງບໍລິສັດການຢາ, ໂຮງງານຜະລິດຢາ ແລະ ຮ້ານຂາຍຢາ ທີ່ຢູ່ພາຍໃຕ້ ຄວາມຮັບຜິດຊອບຂອງທ່ານ ເພື່ອຊາບແລະໃຫ້ຄວາມຮ່ວມມືໃນການ ປະຕິບັດຢ່າງເຂັ້ມງວດດ້ວຍ.
6. ມອບໃຫ້ ກົມອາຫານ ແລະ ຢາ ສືບຕໍ່ຕິດຕາມ - ຊຸກຍູ້ການຈັດຕັ້ງປະຕິບັດຄຳສັ່ງແນະນຳສະບັບນີ້ ພ້ອມດ້ວຍປະເມີນຜົນ, ສະເໜີວິທີ ທາງແກ້ໄຂ ແລະ ລາຍງານເປັນໄລຍະ 06 ເດືອນ, 01 ປີ ໃຫ້ການນຳກະຊວງສາທາລະນະສຸກຊາບ.

ຄຳສັ່ງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ

ລັດຖະມົນຕີວ່າການກະຊວງສາທາລະນະສຸກ,

ກະຊວງ ສາທາລະນະສຸກ
ລັດຖະມົນຕີ

ສາດສະດາຈານ ດຣ ເອກສະຫວ່າງ ວົງວິຈິດ

<u>ບ່ອນນຳສົ່ງ:</u>

- ກົມກອງທີ່ກ່ຽວຂ້ອງ ບ່ອນລະ 01 ສະບັບ.
- ພະແນກສາທາລະນະສຸກແຂວງ ທຸກໆແຂວງໃນທົ່ວປະເທດ ແຂວງລະ 01 ສະບັບ.
- ສຳເນົາຫ້ອງການ ກຊສ 01 ສະບັບ.